ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 1709 /ກວຕ

ນະຄອນຫຼວງວຽງຈັນ, ວັນທີ: 30 NOV 2017

# ຂໍ້ຕົກລົງ
## ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີລາຍການກ່ຽວກັບມາດຕະຖານຜະລິດຕະພັນ ອຸປະກອນໄຟຟ້າ-ເອເລັກໂຕຼນິກສາກົນ ມາເປັນມາດຕະຖານແຫ່ງຊາດລາວ ຈຳນວນ 59 ມາດຕະຖານ

- ອີງຕາມ ກົດໝາຍວ່າດ້ວຍມາດຕະຖານ (ສະບັບປັບປຸງ) ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014
- ອີງຕາມບົດບັນທຶກກອງປະຊຸມ ຄະນະກຳມະການສະພາມາດຕະຖານແຫ່ງຊາດ, ສະບັບເລກທີ 0026/ສມຊ-ພມ, ລົງວັນທີ 19 ຕຸລາ 2017;
- ອີງຕາມ ການສະເໜີຂອງປະທານສະພາມາດຕະຖານແຫ່ງຊາດ ສະບັບເລກທີ 0027/ກວຕ-ສມຊ, ລົງວັນທີ 24 ຕຸລາ 2017.

**ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:**

ມາດຕາ 1. ເຫັນດີຮັບຮອງ ແລະ ປະກາດໃຊ້ບັນຊີລາຍການ ກ່ຽວກັບ ມາດຕະຖານຜະລິດຕະພັນອຸປະກອນໄຟຟ້າ-ເອເລັກໂຕຼນິກສາກົນ ມາເປັນມາດຕະຖານແຫ່ງຊາດລາວ ຈຳນວນ 59 ມາດຕະຖານ ແຕ່ສະບັບ ມລ 374-2017 ເຖິງ 432-2017 ຢ່າງເປັນທາງການ.

ມາດຕາ 2. ໃຫ້ຫ້ອງການ, ກົມ, ສະຖາບັນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 3. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ບໍ່ວຽງຄຳ ວົງດາລາ